ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນາຖາວອນ
----===000===----

ສຳນັກງານ ນາຍົກລັດຖະມົນຕີ

ເລກທີ່ 206 /ນຍ.
ນະຄອນຫລວງວຽງຈັນ, ວັນທີ່ 27.07.2007.

# ດຳລັດ
# ວ່າດ້ວຍການຄວບຄຸມພະຍາດລະບາດສັດ

- ອີງຕາມກົດໝາຍ ວ່າດ້ວຍລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ່ 02/ສພຊ, ລົງວັນທີ່ 06 ພຶດສະພາ 2003.
- ອີງຕາມກົດໝາຍ ວ່າດ້ວຍກະສິກຳ ສະບັບເລກທີ່ 01/98 ສພຊ, ລົງວັນທີ່ 10/10/1998.
- ອີງຕາມໜັງສືສະເໜີ ຂອງລັດຖະມົນຕີວ່າການກະຊວງກະສິກຳ ແລະ ປ່າໄມ້ ເລກທີ່ ລົງວັນທີ່

## ນາຍົກລັດຖະມົນຕີ ອອກດຳລັດ:

## ໝວດທີ 1
## ບົດບັນຍັດທົ່ວໄປ

ມາດຕາ 1. ຈຸດປະສົງ

ດຳລັດສະບັບນີ້ ກຳນົດຫລັກການ, ລະບຽບການ, ວິທີການ ແລະ ມາດຕະການ ເພື່ອຄວບຄຸມພະຍາດລະບາດສັດ ໃຫ້ເປັນເອກະພາບ ໃນຂອບເຂດທົ່ວປະເທດ.

ມາດຕາ 2. ຄວາມໝາຍຂອງຄຳສັບ

ດຳລັດສະບັບນີ້ ໄດ້ຈຳກັດຄວາມໝາຍ ຂອງບັນດາຄຳສັບ ໄວ້ດັ່ງນີ້:

- " ສະຖານທີ່ລ້ຽງສັດ " ໝາຍເຖິງ ທຸກການສ້າງຕັ້ງ, ການກໍ່ສ້າງ, ຄັງ ຫລື ຟາມ ທີ່ຕັ້ງຢູ່ໃນອານາເຂດດິນແດນ ຂອງສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສຳລັບລ້ຽງສັດ ທີ່ໄດ້ກຳນົດໄວ້ ໃນດຳລັດສະບັບນີ້.
- " ສັດ " ໝາຍເຖິງ ສັດລ້ຽງລູກດ້ວຍນົມ ເຊັ່ນ: ຊ້າງ, ມ້າ, ລໍ, ລາ, ງົວ, ຄວາຍ, ໝູ, ແກະ, ແບ້, ໝາ ແລະ ແມວ, ສັດປີກ, ສັດເລືອຄານ ລວມທັງສັດປ່າ.
- "ພາຫະນຳເຊື້ອພະຍາດ" ໝາຍເຖິງ ສັດທີ່ມີກະດູກສັນຫລັງ ແລະ ບໍ່ມີກະດູກສັນຫລັງ ທີ່ເປັນສາຍເຫດທາງດ້ານຊີວະ ແລະ ວັດຖຸ ທີ່ພາໃຫ້ເກີດການຕິດຕໍ່ ແລະແຜ່ເຊື້ອພະຍາດ.
- " ໄລຍະຟັກເຊື້ອ " ໝາຍເຖິງ ໄລຍະເວລາທີ່ສັດ ໄດ້ຮັບເຊື້ອພະຍາດເຂົ້າໄປໃນຮ່າງກາຍ ເຖິງມື້ທີ່ສັດສະແດງອາການພາຍນອກອອກໃຫ້ເຫັນ ເປັນຄັ້ງທຳອິດ.

- " ສັດທີ່ສົງໄສຕິດເຊື້ອພະຍາດ " ໝາຍເຖິງ ສັດທຸກຊະນິດ ທີ່ມີການພົວພັນ ໂດຍທາງກົງ ຫລືໂດຍທາງອ້ອມ ກັບເຊື້ອ ທີ່ເປັນສາເຫດພາໃຫ້ເກີດພະຍາດ.
- " ສັດທີ່ສົງໄສເປັນພະຍາດ " ໝາຍເຖິງ ສັດທີ່ໄດ້ຮັບຜົນກະທົບ ຈາກເຊື້ອພະຍາດໂດຍກົງ ແລ້ວສະແດງອາການພາຍນອກ ຫລື ຮ່ອງຮອຍຂອງພະຍາດ.
- " ການຢັ້ງຢືນການເກີດພະຍາດ " ໝາຍເຖິງ ການແຈ້ງການ ກ່ຽວກັບການເກີດພະຍາດສັດ ຂອງອົງການຄຸ້ມຄອງສັດຕະວະແພດ ຕາມຜົນຂອງການວິໄຈ ຈາກຫ້ອງວິໄຈພະຍາດສັດ ຫລື ການບົ່ງມະຕິພະຍາດສັດໂດຍອີງຕາມການສະແດງອາການ ແລະ ຂໍ້ມູນທາງລະບາດວິທະຍາທີ່ຊັດເຈນ.
- " ພະຍາດຕິດແປດຮ້າຍແຮງ " ໝາຍເຖິງ ພະຍາດທີ່ຈຳເປັນຕ້ອງລາຍງານ, ຊຶ່ງມີຄວາມອັນຕະລາຍຮ້າຍແຮງ, ແຜ່ລາມໄວ ແລະ ສາມາດຕິດຕໍ່ຈາກເຂດໜຶ່ງ ໄປຫາອີກເຂດໜຶ່ງ ຫລື ຈາກປະເທດໜຶ່ງ ໄປຫາອີກປະເທດໜຶ່ງ ເປັນຜົນສະທ້ອນທີ່ຮ້າຍແຮງຕໍ່ເສດຖະກິດ.
- " ເຈົ້າໜ້າທີ່ກວດກາສັດຕະວະແພດ " ໝາຍເຖິງ ພະນັກງານສັດຕະວະແພດ ຫລື ພະນັກງານວິຊາການ ທີ່ໄດ້ຖືກແຕ່ງຕັ້ງ ຢ່າງເປັນທາງການ ເພື່ອດຳເນີນການກວດກາສຸຂະພາບສັດ, ກວດກາອະນາໄມຜະລິດຕະພັນສັດ ແລະ ເປັນຜູ້ອອກໃບຢັ້ງຢືນການກວດກາຕາມລະບຽບການ.
- " ອົງການຄຸ້ມຄອງສັດຕະວະແພດ " ໝາຍເຖິງ ຂະແໜງການຂອງລັດ ທີ່ມີອຳນາດໃນການຄຸ້ມຄອງວຽກງານບໍລິການສັດຕະວະແພດ ໃນຂອບເຂດທົ່ວປະເທດ.

ມາດຕາ 3. ຂອບເຂດການນຳໃຊ້

ດຳລັດສະບັບນີ້ ມີຜົນບັງຄັບປະຕິບັດ ສຳລັບທຸກສຳນັກງານ, ອົງການຂອງລັດ, ກະຊວງ, ອົງການທຽບເທົ່າ, ອົງການປົກຄອງທ້ອງຖິ່ນ, ວິສາຫະກິດ, ກຸ່ມລ້ຽງສັດ, ສະມາຄົມລ້ຽງສັດ, ສະຫະກອນ, ບຸກຄົນ ຫລື ນິຕິບຸກຄົນ ທີ່ພົວພັນເຖິງການຄວບຄຸມ, ການປ້ອງກັນ ແລະ ການກຳຈັດພະຍາດສັດ ຢູ່ໃນດິນແດນ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ.

ມາດຕາ 4. ການຮ່ວມມືກັບສາກົນ

ລັດສົ່ງເສີມ ໃຫ້ມີການເປີດກ້ວາງ ການຮ່ວມມືກັບສາກົນ ກ່ຽວກັບການແລກປ່ຽນບົດຮຽນ, ການຝຶກອົບຮົມ, ການກໍ່ສ້າງພະນັກງານ, ການຊ່ວຍເຫລືອໃນຂົງເຂດວຽກງານຮັກສາສຸຂະພາບສັດ, ຄວບຄຸມ, ປ້ອງກັນ ແລະ ກຳຈັດພະຍາດລະບາດສັດ.

## ໝວດທີ 2
## ການຄວບຄຸມພະຍາດລະບາດສັດ

ມາດຕາ 5. ການລາຍງານ

ເຈົ້າຂອງສັດ, ຜູ້ດູແລສັດ ຫລື ບຸກຄົນທົ່ວໄປ ທີ່ຮູ້ເຫັນ ຫລື ສົງໄສ ວ່າສັດເຈັບ ຫລື ຕາຍ ໂດຍບໍ່ຮູ້ສາເຫດ ຕ້ອງລາຍງານ ໃຫ້ສັດຕະວະແພດ ທີ່ຢູ່ໃກ້ທີ່ສຸດ ຫລື ອົງການປົກຄອງກ່ຽວຂ້ອງຊາບໂດຍດ່ວນ.

ມາດຕາ 6. ລາຍຊື່ ຂອງພະຍາດຕິດແປດຮ້າຍແຮງ

ລາຍຊື່ຂອງພະຍາດຕິດແປດຮ້າຍແຮງ ມີດັ່ງລຸ່ມນີ້ :

1. ພະຍາດປາກເປື່ອຍລີ້ງເລັບ
2. ພະຍາດເຕົ້າໂຮມເລືອດງົວຄວາຍ
3. ພະຍາດໄຂ້ເລືອດດຳ
4. ພະຍາດອະຫິວາໝູ
5. ພະຍາດນິວຄາເຊີນ
6. ພະຍາດວໍ້
7. ພະຍາດໄຂ້ຫວັດສັດປີກ
8. ພະຍາດປາກເປື່ອຍ
9. ພະຍາດປາກເປື່ອຍໃນໝູ
10. ພະຍາດໄຂ້ລີ້ນກໍ່າ
11. ພະຍາດ ຜິວໜັງອັກເສບຕິດແປດ
12. ພະຍາດເຍື່ອຫຸ້ມປອດອັກເສບງົວຄວາຍຕິດແປດ
13. ພະຍາດໝາກສຸກແກະ ແລະ ແບ້
14. ພະຍາດອະຫິວາສັດລ້ຽງເອື້ອງນ້ອຍ
15. ພະຍາດອະຫິວາງົວຄວາຍ
16. ພະຍາດ ໄຂ້ ຣິຟ ວາເລ
17. ພະຍາດອະຫິວາມ້າ ອາຟຣິກກາ
18. ພະຍາດອະຫິວາໝູ ອາຟຣິກາ

ແລະ ພະຍາດສັດອື່ນໆ ຕາມທີ່ໄດ້ກຳນົດໄວ້ ໃນລະບຽບການ ຂອງອົງການຄຸ້ມຄອງສັດຕະວະແພດ.

ມາດຕາ 7. ການແຈ້ງການກ່ຽວກັບພະຍາດຕິດແປດຮ້າຍແຮງ

ການແຈ້ງການກ່ຽວກັບພະຍາດຕິດແປດຮ້າຍແຮງ ເປັນໜ້າທີ່ ຂອງອົງການຄຸ້ມຄອງສັດຕະວະແພດ ແລະ ເປັນພັນທະຂອງທົ່ວປວງຊົນ, ຖ້າຫາກເກີດພະຍາດໃດໜຶ່ງ ຕາມທີ່ໄດ້ກຳນົດໄວ້ ໃນມາດຕາ 6 ຂອງດຳລັດ ສະບັບນີ້ ຕ້ອງໄດ້ເຜີຍແຜ່ ໃຫ້ແກ່ມວນຊົນຮັບຊາບ.

ມາດຕາ 8. ການປະຕິບັດກໍລະນີສົງໄສສັດຕິດເຊື້ອພະຍາດຕິດແປດຮ້າຍແຮງ

ກໍລະນີສົງໄສວ່າ ສັດຕິດເຊື້ອພະຍາດຕິດແປດຮ້າຍແຮງໃດໜຶ່ງ ອົງການຄຸ້ມຄອງສັດຕະວະແພດ ຕ້ອງໄດ້ສົ່ງເຈົ້າໜ້າທີ່ກວດກາສັດຕະວະແພດ ຂອງຕົນລົງໄປຄົ້ນຫາ ເພື່ອຊອກສາເຫດຂອງພະຍາດ, ຊອກຫາເຊື້ອພະຍາດ ແລະ ເກັບຊິ້ນສ່ວນຕົວຢ່າງ ຫລື ຖ້າມີຄວາມຈຳເປັນ ອາດນຳເອົາສັດທັງໂຕ ສົ່ງໄປຫ້ອງວິໄຈ ພ້ອມທັງເປັນຜູ້ຮັບຜິດຊອບ ຕິດຕາມການສົ່ງຊິ້ນສ່ວນຕົວຢ່າງ ດ້ວຍຄວາມເອົາໃຈໃສ່ເປັນພິເສດ ເພື່ອປ້ອງກັນບໍ່ໃຫ້ເຊື້ອພະຍາດ ແຜ່ລາມໄປສູ່ສັດໂຕອື່ນ ຫລື ພື້ນທີ່ອື່ນ.

ສຳລັບສະຖານທີ່ລ້ຽງສັດ ບ່ອນໃດກໍຕາມ ທີ່ໄດ້ຮັບການຢືນຢັນ ຢ່າງເປັນທາງການວ່າ ເປັນຕົ້ນເຫດໃນການນຳເຊື້ອພະຍາດ ມາສູ່ສະຖານທີ່ເກີດເຫດ ຫລື ສະຖານທີ່ລ້ຽງສັດໃດກໍຕາມ ທີ່ມີການພົວພັນໂດຍກົງ ຫລື

ທາງອ້ອມ ກັບສະຖານທີ່ຕົ້ນເຫດ ຕ້ອງໄດ້ກຳນົດເປັນສະຖານທີ່ ຕິດຕາມລະວັງພະຍາດ ຢ່າງເປັນທາງການ ໂດຍຕ້ອງ ປະຕິບັດຕາມມາດຕະການຄວບຄຸມພະຍາດລະບາດສັດ ທີ່ກຳນົດໄວ້ໃນດຳລັດສະບັບນີ້.

ມາດຕະການດັ່ງກ່າວ ຈະຍົກເລີກໄດ້ ກໍ່ຕໍ່ເມື່ອສະຖານທີ່ເກີດເຫດນັ້ນ ໄດ້ຮັບການຢືນຢັນຢ່າງເປັນທາງການວ່າ ບໍ່ມີເຊື້ອພະຍາດຫລົງເຫລືອຢູ່.

ມາດຕາ 9. ການປະກາດເຂດພະຍາດລະບາດສັດ

ການປະກາດ ແລະ ແຈ້ງການເຂດພະຍາດລະບາດສັດ ຕ້ອງປະຕິບັດດັ່ງນີ້:

1. ເມື່ອມີການຢັ້ງຢືນ ຢ່າງເປັນທາງການວ່າ ພົບພະຍາດຕິດແປດຮ້າຍແຮງໃນເຂດໃດໜຶ່ງ ອົງການຄຸ້ມຄອງສັດຕະວະແພດ ຕ້ອງນຳສະເໜີ ໃຫ້ອົງການປົກຄອງ ບ່ອນທີ່ເກີດລະບາດຂອງພະຍາດສັດ ປະກາດເປັນເຂດພະຍາດລະບາດສັດ ພ້ອມທັງແຈ້ງເຫດການນັ້ນ ໃຫ້ທຸກພາກສ່ວນກ່ຽວຂ້ອງຮັບຊາບໂດຍດ່ວນ. ການປະກາດເຂດພະຍາດລະບາດສັດ ໃຫ້ປະຕິບັດຕາມກໍລະນີດັ່ງນີ້:
   - ຖ້າຫາກພະຍາດລະບາດສັດ ເກີດຂຶ້ນຈຳກັດຂອບເຂດຢູ່ໃນ 1 ເມືອງ ໃຫ້ເຈົ້າເມືອງເປັນຜູ້ປະກາດເຂດພະຍາດລະບາດສັດ.
   - ຖ້າຫລາຍກວ່າ 1 ເມືອງ ແຕ່ຢູ່ໃນຂອບເຂດ 1 ແຂວງ ຫລື ນະຄອນຫລວງ ໃຫ້ເຈົ້າແຂວງ ຫລື ເຈົ້າຄອງນະຄອນຫລວງ ເປັນຜູ້ປະກາດເຂດພະຍາດລະບາດສັດ.
   - ຖ້າຫລາຍກວ່າ 1 ແຂວງ ຕ້ອງແມ່ນນາຍົກລັດຖະມົນຕີ ເປັນຜູ້ປະກາດເຂດພະຍາດລະບາດສັດ.
2. ຕ້ອງກຳນົດຂອບເຂດສະຖານທີ່ ທີ່ພົບພະຍາດ ແລະ ເຂດໃກ້ຄຽງ ໃນລັດສະໝີ ຢ່າງຕ່ຳ 1 ກິໂລແມັດ ຫລື ສູງສຸດ 10 ກິໂລແມັດ ເປັນເຂດພະຍາດລະບາດສັດ, ການກຳນົດຂອບເຂດພະຍາດລະບາດສັດ ຕ້ອງອີງໃສ່ຈຸດພິເສດທາງດ້ານພູມສາດ, ຂົງເຂດການປົກຄອງ, ສະພາບແວດລ້ອມ ແລະ ປັດໄຈທາງດ້ານລະບາດວິທະຍາທີ່ກ່ຽວຂ້ອງກັບພະຍາດທີ່ກຳລັງລະບາດເປັນພື້ນຖານ.
3. ໃນກໍລະນີທີ່ພະຍາດລະບາດສັດ ຫາກເກີດຂຶ້ນຢູ່ຕາມຊາຍແດນທີ່ຕິດຈອດກັບປະເທດອື່ນ, ອົງການຄຸ້ມຄອງສັດຕະວະແພດ ຕ້ອງໄດ້ແຈ້ງຢ່າງເປັນທາງການ ໃຫ້ອົງການພະຍຸສັດສາກົນ ແລະ ອົງການກ່ຽວຂ້ອງ ຂອງປະເທດທີ່ມີຊາຍແດນຕິດກັບນັ້ນຮັບຊາບ ແລະ ຮ່ວມມືກັນສ້າງເຂດດັ່ງກ່າວ ໃຫ້ເປັນເຂດພະຍາດລະບາດສັດ ຕາມທີ່ກຳນົດໄວ້ ໃນຂໍ້ 1 ຂອງມາດຕານີ້.

ມາດຕາ 10. ການຄວບຄຸມພະຍາດໃນເຂດພະຍາດລະບາດສັດ

ການຄວບຄຸມພະຍາດໃນເຂດພະຍາດລະບາດສັດ ແມ່ນປະຕິບັດດັ່ງຕໍ່ໄປນີ້:

1. ຕ້ອງກຳນົດຂອບເຂດ ແລະ ຈັດຕັ້ງໃຫ້ມີການລົງໄປສຳຫລວດ, ຕິດຕາມລະວັງພະຍາດ ແລະ ເກັບກຳຂໍ້ມູນຈຳນວນສະຖານທີ່ລ້ຽງສັດ ແລະ ຈຳນວນສັດຊະນິດທີ່ສ່ຽງຕໍ່ການຕິດເຊື້ອທັງໝົດ, ຫາກຈຳເປັນຕ້ອງຈັດຕັ້ງຈຸດດ່ານ ເພື່ອດຳເນີນການຄວບຄຸມການເຄື່ອນຍ້າຍສັດ ຫລື ຜະລິດຕະພັນສັດ ເຂົ້າ-ອອກ ໃນເຂດພະຍາດລະບາດສັດ.
2. ຕ້ອງລົງຕິດຕາມ ແລະ ກວດກາ ສະຖານທີ່ລ້ຽງສັດ ແລະ ສຸຂະພາບສັດທັງໝົດ.
3. ຕ້ອງແຍກກັກຂັງສັດ ຊະນິດທີ່ສ່ຽງຕໍ່ການຕິດເຊື້ອ ໄວ້ໃນສະຖານທີ່ຕ່າງຫາກ.
4. ຕ້ອງສ້າງອ່າງຂ້າເຊື້ອ ໃສ່ຕາມຈຸດທາງເຂົ້າ, ທາງອອກສະຖານທີ່ລ້ຽງສັດ ແລະ ບ່ອນແຍກກັກຂັງສັດ.
5. ຕ້ອງເກັບຕົວຢ່າງ ສິ່ງເຂົ້າຫ້ອງວິໄຈພະຍາດສັດ ເພື່ອຢັ້ງຢືນເຊື້ອພະຍາດທີ່ກຳລັງລະບາດ, ກຳນົດຄວາມຮ້າຍແຮງ ແລະ ຄວາມສ່ຽງຂອງພະຍາດ.

6. ຕ້ອງດຳເນີນການສອບຖາມ ແລະ ຄົ້ນຫາດ້ານລະບາດວິທະຍາຢ່າງຄົບຖ້ວນ.
7. ເຈົ້າຂອງສັດ ຕ້ອງໃຫ້ຄວາມຮ່ວມມື ໃນການຈັດຕັ້ງປະຕິບັດ ມາດຕະການຄວບຄຸມພະຍາດລະບາດສັດຢ່າງເຂັ້ມງວດ.
8. ການຄວບຄຸມພະຍາດລະບາດສັດ ຕ້ອງປະຕິບັດຈົນກວ່າ ຈະພົ້ນໄລຍະຟັກເຊື້ອຂອງພະຍາດແຕ່ລະຊະນິດ ຫລັງພົບເຫັນສັດເຈັບ, ຕາຍ ຫລື ຂ້າທຳລາຍໂຕສຸດທ້າຍ ແລະ ສຳເລັດການອະນາໄມ ແລະ ຂ້າເຊື້ອ.

ມາດຕາ 11. ການເກືອດຫ້າມ

1. ຫ້າມເຄື່ອນຍ້າຍສັດມີຊີວິດ, ຜະລິດຕະພັນສັດ, ຊິ້ນສ່ວນຈາກສັດ ແລະ ສິ່ງເສດເຫລືອຈາກສັດ ປະເພດທີ່ມີຄວາມສ່ຽງ ຕໍ່ການຕິດເຊື້ອພະຍາດ ເຂົ້າ ຫລື ອອກ ເຂດພະຍາດລະບາດສັດ.
2. ຫ້າມບໍ່ໃຫ້ຄົນ, ພາຫະນະ ຫລື ສັດທີ່ອາດເປັນພາຫະນຳເຊື້ອພະຍາດເຂົ້າ-ອອກ ເຂດລະບາດຂອງພະຍາດສັດ ເວັ້ນເສຍແຕ່ໄດ້ຮັບການອະນຸຍາດຈາກພາກສ່ວນກ່ຽວຂ້ອງ.
3. ຫ້າມນຳເອົາຊີ້ນ, ຊາກສັດ, ອາຫານສັດ, ເຄື່ອງມື, ສິ່ງເສດເຫລືອ, ນ້ຳເສັຍ ແລະ ອາຈົມ ທີ່ມີຄວາມສ່ຽງຕໍ່ການຕິດເຊື້ອພະຍາດ ອອກຈາກເຂດພະຍາດລະບາດສັດ.

ມາດຕາ 12. ການອະນາໄມ ແລະ ຂ້າເຊື້ອພະຍາດໃນເຂດພະຍາດລະບາດສັດ

ການອະນາໄມ ແລະ ຂ້າເຊື້ອຄອກສັດ ຫລື ສະຖານທີ່ກັກຂັງສັດ ແລະ ບໍລິເວນອ້ອມຮອບ, ພາຫະນະຂົນສົ່ງ ແລະ ອຸປະກອນເຄື່ອງມື ທີ່ປົນເປື້ອນດ້ວຍເຊື້ອພະຍາດ ແລະ ການກຳຈັດ ຫລື ທຳລາຍຊາກສັດທີ່ຕາຍ ຫລື ຖືກຂ້າ, ວັດສະດຸ, ເສດອາຫານ, ນ້ຳ, ອາຈົມ ແລະ ສິ່ງຮອງພື້ນ ທີ່ປົນເປື້ອນດ້ວຍເຊື້ອພະຍາດ ຕ້ອງປະຕິບັດຕາມລະບຽບການ ຂອງອົງການຄຸ້ມຄອງສັດຕະວະແພດທີ່ກຳນົດໄວ້.

ມາດຕາ 13. ການຄວບຄຸມພະຍາດລະບາດສັດໃນເຂດສັດປ່າ

ກໍລະນີ ສົງໄສ ຫລື ຢັ້ງຢືນວ່າ ສະຖານທີ່ໃດໜຶ່ງ ທີ່ສັດປ່າອາໄສຢູ່ ຫາກເກີດພະຍາດ ຕາມທີ່ໄດ້ລະບຸໄວ້ໃນມາດຕາ 6 ຂອງດຳລັດສະບັບນີ້, ອົງການຄຸ້ມຄອງສັດຕະວະແພດ ຕ້ອງສະເໜີໃຫ້ອົງການປົກຄອງທ້ອງຖິ່ນ ທີ່ກ່ຽວຂ້ອງ ເພື່ອປະກາດເປັນເຂດພະຍາດລະບາດສັດ ແລະ ດຳເນີນມາດຕະການຄວບຄຸມພະຍາດລະບາດສັດໃນເຂດດັ່ງກ່າວ.

ມາດຕາ 14. ການປະກາດຍົກເລີກເຂດພະຍາດລະບາດສັດ

ການປະກາດຍົກເລີກເຂດພະຍາດລະບາດສັດຢ່າງເປັນທາງການ ກໍຕໍ່ເມື່ອໄດ້ມີການຢັ້ງຢືນວ່າ ບໍ່ພົບກໍລະນີສົງໄສ ສັດເປັນພະຍາດທີ່ເປັນຕົ້ນເຫດຂອງການລະບາດ, ພາຍຫລັງທີ່ໄດ້ໃຊ້ມາດຕະການທັງໝົດຢ່າງຄົບຖ້ວນ, ອົງການຄຸ້ມຄອງສັດຕະວະແພດ ຕ້ອງຂຽນບົດລາຍງານ ເພື່ອເປັນບ່ອນອີງໃນການຍົກເລີກເຂດພະຍາດລະບາດສັດ ຊຶ່ງບົດລາຍງານ ຕ້ອງປະກອບດ້ວຍ: ສະພາບທີ່ຕັ້ງຂອງສະຖານທີ່ລ້ຽງສັດ ທີ່ສົງໄສເກີດພະຍາດ, ບັນດາມາດຕະການທີ່ໃຊ້ໃນການຄວບຄຸມ ແລະ ໄລຍະເວລາຂອງການຍົກເລີກມາດຕະການດັ່ງກ່າວ ໃຫ້ອົງການປົກຄອງທີ່ຕົນສັງກັດຢູ່ຮັບຊາບ ພ້ອມທັງນຳສະເໜີໃຫ້ປະກາດຍົກເລີກເຂດພະຍາດລະບາດສັດ ຢ່າງເປັນທາງການ.

ມາດຕາ 15. ການໂຄສະນາ

ກະຊວງກະສິກຳ ແລະ ປ່າໄມ້ ໂດຍປະສານສົມທົບ ກັບກະຊວງຖະແຫລງຂ່າວ ແລະ ວັດທະນະທຳ, ອົງການປົກຄອງທ້ອງຖິ່ນ ແລະ ອົງການກ່ຽວຂ້ອງ ຕ້ອງອອກຂ່າວ ຫລື ໂຄສະນາ ກ່ຽວກັບມາດຕະການຄວບຄຸມການລະບາດຂອງພະຍາດສັດ ຈົນກ່ວາໄດ້ມີການປະກາດຍົກເລີກເຂດດັ່ງກ່າວ ຢ່າງເປັນທາງການ.

ມາດຕາ 16. ການນຳເອົາສັດມາລ້ຽງຄືນໃໝ່

ການອະນຸຍາດ ໃຫ້ນຳເອົາສັດມາລ້ຽງຄືນໃໝ່ໃນເຂດເກີດພະຍາດລະບາດສັດ ກໍຕໍ່ເມື່ອສະຖານທີ່ດັ່ງກ່າວ ໄດ້ປະຕິບັດຄົບຖ້ວນ ຕາມມາດຕະການຄວບຄຸມພະຍາດລະບາດສັດ, ມາດຕະການອະນາໄມ ແລະ ຂ້າເຊື້ອ ແລະ ໄດ້ຜ່ານການກວດກາ ແລະ ຢັ້ງຢືນຢ່າງເປັນທາງການ ຈາກອົງການຄຸ້ມຄອງສັດຕະວະແພດ.

## ໝວດທີ 3

## ການຄຸ້ມຄອງ ແລະ ກວດກາວຽກງານຄວບຄຸມພະຍາດລະບາດສັດ

ມາດຕາ 17. ອົງການຄຸ້ມຄອງສັດຕະວະແພດ

ອົງການຄຸ້ມຄອງສັດຕະວະແພດ ປະກອບດ້ວຍ :

- ຂັ້ນສູນກາງ ແມ່ນກະຊວງກະສິກຳ ແລະ ປ່າໄມ້
- ຂັ້ນແຂວງ ແມ່ນພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫລວງ
- ຂັ້ນເມືອງ ແມ່ນຫ້ອງການກະສິກຳ ແລະ ປ່າໄມ້ເມືອງ
- ໜ່ວຍສະເພາະກິດຄວບຄຸມພະຍາດລະບາດສັດ

ມາດຕາ 18. ພາລະບົດບາດຂອງອົງການຄຸ້ມຄອງສັດຕະວະແພດ

ພາລະບົດບາດຂອງອົງການຄຸ້ມຄອງສັດຕະວະແພດ ກ່ຽວກັບວຽກງານຄວບຄຸມພະຍາດລະບາດສັດ ຄື : ຕິດຕາມ, ກວດກາ, ຕິດຕາມລະວັງ, ປ້ອງກັນ ແລະ ສະກັດກັ້ນ ການແຜ່ຂະຫຍາຍຂອງພະຍາດລະບາດສັດ ຈາກພາຍນອກເຂົ້າສູ່ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ແລະ ສະກັດກັ້ນ ການແຜ່ລະບາດຂອງພະຍາດລະບາດສັດພາຍໃນປະເທດ ບໍ່ໃຫ້ຂະຫຍາຍແຜ່ລາມອອກສູ່ວົງກ້ວາງ, ແນະນຳວິທີການປ້ອງກັນ ແລະ ຮັກສາສຸຂະພາບສັດລ້ຽງ ໃຫ້ແກ່ປະຊາຊົນບັນດາເຜົ່າ ທີ່ລ້ຽງສັດແບບຄອບຄົວ, ກຸ່ມ ແລະ ແບບອຸດສາຫະກຳ.

ມາດຕາ 19. ສິດ ແລະ ໜ້າທີ່ຂອງອົງການຄຸ້ມຄອງສັດຕະວະແພດຂັ້ນສູນກາງ

ອົງການຄຸ້ມຄອງສັດຕະວະແພດຂັ້ນສູນກາງ ມີສິດ ແລະ ໜ້າທີ່ຄວບຄຸມພະຍາດລະບາດສັດ ດັ່ງນີ້ :

1. ເປັນເສນາທິການໃຫ້ແກ່ລັດຖະບານ ໃນການຜັນຂະຫຍາຍຍຸດທະສາດ ກ່ຽວກັບການຕິດຕາມລະວັງ ແລະ ຄວບຄຸມພະຍາດລະບາດສັດ ໃຫ້ກາຍເປັນແຜນການ, ໂຄງການລະອຽດ ແລະ ລະບຽບການ.
2. ມີໜ້າທີ່ ໃນການຈັດຕັ້ງວາງແຜນ ປາບປາມພະຍາດລະບາດສັດ ທັງສະເພາະໜ້າ ແລະ ຍາວນານ ໄວ້ຢ່າງຊັດເຈນ, ພ້ອມນັ້ນ ຕ້ອງກຳນົດ ບັນດາມາດຕະການລະດັບຊາດຕ່າງໆທີ່ຈຳເປັນ, ຕ້ອງຈັດຕັ້ງປະຕິບັດຢ່າງເປັນເອກະພາບ ແລະ ເປັນມາດຕະຖານດຽວກັນ ໃນຂອບເຂດທົ່ວປະເທດ.

3. ອອກຄຳສັ່ງໃຫ້ໜ່ວຍງານທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດບັນດາມາດຕະການ ແລະ ຂໍ້ເກືອດຫ້າມ ທີ່ໄດ້ກຳນົດໄວ້ ພ້ອມທັງເປັນເຈົ້າການດູແລ, ຕິດຕາມ ແລະ ກວດກາ ຢ່າງເຂັ້ມງວດ
4. ສ້າງຮ່າງແຜນແມ່ບົດ, ແຜນໄລຍະຍາວ, ໄລຍະກາງ, ໄລຍະສັ້ນ ແລະ ບັນດາໂຄງການ ກ່ຽວກັບການຕິດຕາມລະວັງ ແລະ ຄວບຄຸມພະຍາດລະບາດສັດ.
5. ມີໜ້າທີ່ໂດຍກົງໃນການຈັດຕັ້ງ, ວາງແຜນຍຸດທະສາດສັກຢາກັນພະຍາດສັດລະດັບຊາດ, ຕ້ອງເປັນຜູ້ກຳນົດຊະນິດຢາປ້ອງກັນ, ຂົງເຂດທີ່ຈຳເປັນ ແລະ ໄລຍະເວລາທີ່ເໝາະສົມ ໃນການນຳໃຊ້ຢາປ້ອງກັນ, ພ້ອມກັນນັ້ນ ຕ້ອງເປັນຜູ້ຊຸກຍູ້, ສົ່ງເສີມ ແລະ ແນະນຳວິທີການນຳໃຊ້ຢາປ້ອງກັນຢ່າງຖືກຕ້ອງ ໃຫ້ແກ່ຊາວກະສິກອນຜູ້ລ້ຽງສັດ ໃນຂອບເຂດທົ່ວປະເທດ.
6. ມີສິດແຕ່ງຕັ້ງ ແລະ ຍົກເລີກ ໜ່ວຍສະເພາະກິດຄວບຄຸມພະຍາດລະບາດສັດ.
7. ວາງລະບຽບການ ແລະ ມາດຕະການກ່ຽວກັບການຕິດຕາມລະວັງ ແລະ ຄວບຄຸມພະຍາດລະບາດສັດ.
8. ຄົ້ນຄ້ວາວິທະຍາສາດເຕັກນິກດ້ານການຕິດຕາມລະວັງ ແລະ ຄວບຄຸມພະຍາດລະບາດສັດ, ສ້າງຕາໜ່າງ ແລະ ໜ່ວຍງານຕິດຕາມລະວັງ ແລະ ຄວບຄຸມພະຍາດລະບາດສັດໃນທົ່ວປະເທດ, ສະໜອງຂໍ້ມູນຂ່າວສານກ່ຽວກັບການລະບາດຂອງພະຍາດສັດ.
9. ພົວພັນຮ່ວມມືກັບສາກົນໃນວຽກງານຕິດຕາມລະວັງ, ຄວບຄຸມພະຍາດລະບາດສັດ ແລະ ຮັກສາສຸຂະພາບສັດ.
10. ພົວພັນປະສານສົມທົບກັບອົງການປົກຄອງທ້ອງຖິ່ນ ແລະ ຂະແໜງການທີ່ກ່ຽວຂ້ອງ ເພື່ອຈັດຕັ້ງປະຕິບັດວຽກງານຕິດຕາມລະວັງ ແລະ ຄວບຄຸມພະຍາດລະບາດສັດຢ່າງຖືກຕ້ອງທົ່ວເຖິງ ແລະ ເຂັ້ມງວດ.
11. ປະຕິບັດສິດ ແລະ ໜ້າທີ່ອື່ນໆ ທີ່ລັດຖະບານມອບໝາຍໃຫ້ ແລະ ຕາມທີ່ໄດ້ກຳນົດໄວ້ ໃນລະບຽບກົດໝາຍ.

ມາດຕາ 20. ສິດ ແລະ ໜ້າທີ່ ຂອງອົງການຄຸ້ມຄອງສັດຕະວະແພດຂັ້ນແຂວງ ແລະ ນະຄອນຫລວງ

ອົງການຄຸ້ມຄອງສັດຕະວະແພດຂັ້ນແຂວງ, ນະຄອນຫລວງ ມີສິດ ແລະ ໜ້າທີ່ຄວບຄຸມພະຍາດລະບາດສັດ ດັ່ງນີ້ :

1. ເປັນເສນາທິການໂດຍກົງ ໃຫ້ອົງການຄຸ້ມຄອງສັດຕະວະແພດຂັ້ນສູນກາງ
2. ຈັດຕັ້ງປະຕິບັດນະໂຍບາຍ ແລະ ແຜນຍຸດທະສາດ ກ່ຽວກັບວຽກງານຄວບຄຸມພະຍາດລະບາດສັດ ທີ່ອົງການຄຸ້ມຄອງສັດຕະວະແພດຂັ້ນສູນກາງ ແລະ ຂອງຕົນວາງອອກ.
3. ຊີ້ນຳຫ້ອງການກະສິກຳ ແລະ ປ່າໄມ້ເມືອງ ກ່ຽວກັບວຽກງານຄວບຄຸມພະຍາດລະບາດສັດ ແລະ ຮັກສາສຸຂະພາບສັດ.
4. ຄຸ້ມຄອງ, ຕິດຕາມ, ກວດກາການປ້ອງກັນ, ຕິດຕາມລະວັງ ແລະ ການສະກັດກັ້ນພະຍາດລະບາດສັດ ຢູ່ໃນຂອບເຂດຄວາມຮັບຜິດຊອບຂອງຕົນ
5. ແນະນຳ, ເຜີຍແຜ່ຂໍ້ມູນຂ່າວສານ ກ່ຽວກັບການປ້ອງກັນ, ຕິດຕາມລະວັງ, ສະກັດກັ້ນ ແລະ ການດັບມອດພະຍາດລະບາດສັດ ພ້ອມທັງຊຸກຍູ້, ສົ່ງເສີມຊາວກະສິກອນ ໃຫ້ເອົາໃຈໃສ່ດູແລ ຮັກສາສຸຂະພາບສັດລ້ຽງຂອງຕົນ.
6. ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງໃນການຄຸ້ມຄອງ, ຕິດຕາມ, ກວດກາ ວຽກງານຄວບຄຸມພະຍາດລະບາດສັດ ເພື່ອເຮັດໃຫ້ລະບຽບການ ກ່ຽວກັບການຄວບຄຸມພະຍາດລະບາດສັດ ທີ່ໄດ້ກຳນົດອອກນັ້ນ ໄດ້ຖືກຈັດຕັ້ງປະຕິບັດ ຢ່າງມີປະສິດທິຜົນ.
7. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມການມອບໝາຍ ແລະ ຕາມທີ່ໄດ້ກຳນົດໄວ້ ໃນລະບຽບກົດໝາຍ.

ມາດຕາ 21. ສິດ ແລະ ໜ້າທີ່ ຂອງອົງການຄຸ້ມຄອງສັດຕະວະແພດ ຂັ້ນເມືອງ

ອົງການຄຸ້ມຄອງສັດຕະວະແພດຂັ້ນເມືອງ ມີສິດ ແລະ ໜ້າທີ່ຄວບຄຸມພະຍາດລະບາດສັດ ດັ່ງນີ້ :

1. ເປັນເສນາທິການໂດຍກົງ ໃຫ້ອົງການຄຸ້ມຄອງສັດຕະວະແພດຂັ້ນແຂວງ, ນະຄອນຫລວງ ແລະ ອົງການປົກຄອງເມືອງ ໃນການຈັດຕັ້ງປະຕິບັດແຜນການ, ຂໍ້ກຳນົດ, ກົດລະບຽບ ແລະ ຄຳແນະນຳ ຂອງພະແນກກະສິກຳ ແລະ ປ່າໄມ້ແຂວງ, ນະຄອນຫລວງ ດ້ານການຄວບຄຸມພະຍາດລະບາດສັດ ແລະ ຮັກສາສຸຂະພາບສັດ.
2. ຈັດຕັ້ງປະຕິບັດຕົວຈິງ ແຜນການໄລຍະຍາວ, ໄລຍະກາງ, ໄລຍະສັ້ນ ແລະ ໂຄງການຕ່າງໆ ກ່ຽວກັບວຽກງານຄວບຄຸມພະຍາດລະບາດສັດ ແລະ ຮັກສາສຸຂະພາບສັດ.
3. ມີໜ້າທີ່ລົງໄປຄົ້ນຫາ, ກວດກາຫາສາເຫດຂອງພະຍາດ, ໃນກໍລະນີສົງໄສວ່າສັດດັ່ງກ່າວ ເປັນພະຍາດຕິດແປດຮ້າຍແຮງ ຕ້ອງລາຍງານໄປຍັງພາກສ່ວນຮັບຜິດຊອບຂັ້ນສູງກວ່າ ຫລື ອົງການປົກຄອງທ້ອງຖິ່ນແລ້ວພ້ອມກັນ ວາງມາດຕະການຄວບຄຸມ ແລະ ສະກັດກັ້ນໂດຍທັນທີ.
4. ປະຕິບັດສິດ ແລະ ໜ້າທີ່ອື່ນໆຕາມການມອບໝາຍ ແລະ ຕາມທີ່ໄດ້ກຳນົດໄວ້ໃນລະບຽບກົດໝາຍ.

ມາດຕາ 22. ໜ່ວຍສະເພາະກິດຄວບຄຸມພະຍາດລະບາດສັດ

ໜ່ວຍສະເພາະກິດຄວບຄຸມພະຍາດລະບາດສັດ ແມ່ນໜ່ວຍງານໜຶ່ງ ທີ່ອົງການຄຸ້ມຄອງສັດຕະວະແພດສົມທົບກັບອົງການປົກຄອງທ້ອງຖິ່ນສ້າງຕັ້ງຂຶ້ນ ເພື່ອເປັນໜ່ວຍປະສານງານ ແລະ ສັ່ງການໃນການຈັດຕັ້ງປະຕິບັດບັນດາມາດຕະການຄວບຄຸມພະຍາດລະບາດສັດທີ່ຈຳເປັນ ທັງເປັນເຈົ້າການໃນການຄົ້ນຫາສາເຫດການລະບາດຂອງພະຍາດ ເພື່ອຮັບປະກັນການຄວບຄຸມພະຍາດລະບາດສັດ ທີ່ເກີດຂຶ້ນນັ້ນ ໃຫ້ທັນກັບສະພາບການ.

## ໝວດທີ 4
## ບົດບັນຍັດສຸດທ້າຍ

ມາດຕາ 23. ການຈັດຕັ້ງປະຕິບັດ

ມອບໃຫ້ກະຊວງກະສິກຳ ແລະ ປ່າໄມ້ ສົມທົບກັບບັນດາກະຊວງ, ອົງການທຽບເທົ່າກະຊວງ ແລະ ອົງການປົກຄອງທ້ອງຖິ່ນ ຈັດຕັ້ງປະຕິບັດດຳລັດສະບັບນີ້ ຢ່າງເຂັ້ມງວດ.

ມາດຕາ 24. ຜົນສັກສິດ

ດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ່ລົງລາຍເຊັນເປັນຕົ້ນໄປ, ທຸກຂໍ້ກຳນົດ, ບົດບັນຍັດໃດ ທີ່ຂັດກັບດຳລັດສະບັບນີ້ ລ້ວນແຕ່ຖືກຍົກເລີກ.

ນາຍົກລັດຖະມົນຕີ ແຫ່ງ ສປປ ລາວ

ບົວສອນ ບຸບຜາວັນ